BANK OF THE LAO PDR
ທະນາຄານແຫ່ງ ສປປ ລາວ
ຂ່າວ NEWS
ພະແນກຂໍ້ມູນຂ່າວສານ ແລະ ປະຊາສຳພັນ, ຫ້ອງການ ທຫລ
ໂທ/ແຟັກ 856 21 213109, 213110



# ກອງປະຊຸມການຮ່ວມມື ແລະ ການພັດທະນາດ້ານການເງິນ ຈີນ-ອາຊຽນ (CHINA-ASEAN Financial Cooperation and Development Conference 2024) ແລະ ງານວາງສະແດງສິນຄ້າ ຈີນ-ອາຊຽນ ຄັ້ງທີ 21 (The 21st CAEXPO) ຢູ່ ເມືອງໜານໜິງ, ເຂດປົກຄອງຕົນເອງກວາງຊີ, ສປ ຈີນ







ໃນລະຫວ່າງວັນທີ 23-25 ກັນຍາ 2024, ທ່ານ ສຸລິວັດ ສຸວັນນະຈູມຄຳ, ຮອງຜູ້ວ່າການ ທຫລ ໄດ້ນຳພາຄະນະຜູ້ແທນຂອງ ທະນາຄານແຫ່ງ ສປປ ລາວ ເຂົ້າຮ່ວມກອງປະຊຸມການຮ່ວມມື ແລະ ການພັດທະນາດ້ານການເງິນ ຈີນ-ອາຊຽນ (CHINA-ASEAN Financial Cooperation and Development Conference 2024) ແລະ ງານວາງສະແດງສິນຄ້າ ຈີນ-ອາຊຽນ ຄັ້ງທີ 21 (The 21st CAEXPO) ຢູ່ ເມືອງໜານໜິງ, ເຂດປົກຄອງຕົນເອງກວາງຊີ, ສປ ຈີນ. ໂດຍປະກອບມີ ຄະນະພັກ-ຄະນະນຳ ຂອງເຂດປົກຄອງຕົນເອງກວາງຊີ, ບັນດາການນຳຈາກອົງການຄຸ້ມຄອງດ້ານການເງິນ, ບັນດາຜູ້ວ່າການ ແລະ ຕົວແທນທະນາຄານກາງຈາກບັນດາປະເທດອາຊຽນ ແລະ ບັນດາສະຖາບັນການເງິນ ລວມທັງທະນາຄານທຸລະກິດ, ບໍລິສັດປະກັນໄພ, ຕະຫຼາດຫຼັກຊັບ ແລະ ບໍລິສັດຫຼັກຊັບ ເຂົ້າຮ່ວມ.

ໃນກອງປະຊຸມດັ່ງກ່າວ, ທ່ານຮອງຜູ້ວ່າການທະນາຄານແຫ່ງ ສປປ ລາວ ໄດ້ຮັບກຽດໃຫ້ຂຶ້ນກ່າວມີຄຳເຫັນຕໍ່ກອງປະຊຸມ ເຊິ່ງທ່ານໄດ້ຍົກໃຫ້ເຫັນເຖິງຜົນສຳເລັດທີ່ ສປປ ລາວ ຍາດມາໄດ້ພາຍໃຕ້ການຮ່ວມມືຈີນ-ອາຊຽນ ທີ່ໄດ້ນຳເອົາຜົນປະໂຫຍດມະຫາສານມາສູ່ປະຊາຊົນລາວ ກໍ່ຄືການຮ່ວມມືທາງດ້ານເສດຖະກິດ, ການຄ້າ ແລະ ການລົງທຶນ ລະຫວ່າງ ສປປ ລາວ ແລະ ສປ ຈີນ ໄດ້ຮັບການຍົກລະດັບເຂົ້າສູ່ລວງເລິກ.

ນອກນັ້ນ, ເນື່ອງໃນໂອກາດທີ່ ສປປ ລາວ ເປັນເຈົ້າພາບອາຊຽນໃນປີ 2024 ນີ້ ທ່ານຮອງຜູ້ວ່າການ ກໍ່ໄດ້ເນັ້ນຕໍ່ກອງປະຊຸມຊາບກ່ຽວກັບວິໄສທັດດ້ານວຽກງານການເງິນ-ການທະນາຄານຂອງ ສປປ ລາວ ວ່າຈະໃຫ້ຄວາມສຳຄັນ ແລະ ຈະຊຸກຍູ້ວຽກງານການເຊື່ອມຕໍ່ ໂດຍສະເພາະການເຂົ້າເຖິງແຫຼ່ງທຶນຂອງຈຸນລະວິສະຫະກິດຂະໜາດນ້ອຍແລະກາງ (MSMEs) ແລະ ການຊຳລະສະສາງຂ້າມແດນລະຫວ່າງປະເທດ ເພື່ອສົ່ງເສີມການນຳໃຊ້ສະກຸນເງິນທ້ອງຖິ່ນເຂົ້າໃນການຊຳລະການຄ້າສອງຝ່າຍໃຫ້ຫຼາຍຂຶ້ນ.







ນອກຈາກນັ້ນ, ຄະນະຜູ້ແທນ ຂອງທະນາຄານແຫ່ງ ສປປ ລາວ ກໍ່ຍັງໄດ້ເຂົ້າຮ່ວມກອງປະຊຸມ ໂຕະມົນສົນທະນາແລກປ່ຽນກ່ຽວກັບການຮ່ວມມືທາງດ້ານການເງິນໃນຫຼາຍຫົວຂໍ້ເປັນຕົ້ນ: ການຊໍາລະສະກຸນເງິນ, ຕະຫຼາດການເງິນ, ການເງິນສີຂຽວ ແລະ ການຕ້ານການຟອກເງິນ ລະຫວ່າງ ຈີນ-ອາຊຽນ. (China-ASEAN Cooperation Roundtable Conference).






# ຂ່າວ-ພາບ: ທະນາຄານແຫ່ງ ສປປ ລາວ.

## ເສດຖະກິດລາວຈະເຂັ້ມແຂງ ຖ້າປວງຊົນຮ່ວມແຮງນໍາໃຊ້ເງິນກີບ